ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມຄຸ້ມຄອງແຮງງານ

ພະແນກຄວາມປອດໄພ ແລະ ສຸຂະພາບແຮງງານ

ນະຄອນຫລວງວຽງຈັນ,ວັນທີ 08 . 07 - 2016

**ບົດບັນທຶກ**

ກອງປະຊຸມຜ່ານຮ່າງຄູ່ມື ແລະ ການທົບທວນຮ່າງນິຍາມໄມ້ທີ່ຖືກຕ້ອງຕາມ
ກົດໝາຍ ໃນຂະແໜງການປຸງແຕ່ງໄມ້ "ວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ"
ວັນທີ 7 ກໍລະກົດ 2016, ທີ່ເຮືອນຮັບແຂກກະຊວງ ຮສສ

ໃນຕອນເຊົ້າເວລາ 8:30 ໂມງຂອງວັນທີ 7 ກໍລະກົດ 2016 ທີ່ເຮືອນຮັບແຂກກະຊວງຮສສ, ກົມຄຸ້ມຄອງແຮງງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຮ່ວມກັບອົງການ GIZ ໂຄງການ FLEGT ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຮ່ວມກັນຈັດກອງປະຊຸມຜ່ານຮ່າງປື້ມຄູ່ມື ແລະ ການທົບທວນນິຍາມໄມ້ທີ່ຖືກຕ້ອງຕາມກົດຫມາຍ ໃນຂະແໜງການປຸງແຕ່ງໄມ້ ດ້ານວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ທີ່ໄດ້ຈັດຂຶ້ນທີ່ເຮືອນຮັບແຂກກະຊວງ ຮສສ, ນະຄອນຫຼວງວຽງຈັນ ໂດຍມີພາກສ່ວນກ່ຽວຂ້ອງຈາກໜ່ວຍງານຕ່າງໆຂອງລັດ ແລະທົວໜ່ວຍທຸລະກິດ ເຂົ້າຮ່ວມທັງໝົດ 25 ທ່ານ, ຍິງ ທ່ານ.

1. **<u>ຈຸດປະສົງ</u>**

ການຈັດກອງປະຊຸມຄັ້ງນີ ແມ່ນ 2 ບັນຫາຫລັກດັ່ງນີ້ :

- ຜ່ານຮ່າງປື້ມຄູ່ມືກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ໃນຂະແໜງການປຸງແຕ່ງໄມ້
- ການຮ່າງນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ໂດຍສະເພາະແມ່ນວຽກງານຄວາມປອດໄພ ແລະ ສຸຂະພາບ **ແຮງງານ, ສິດ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານໃນຂະແໜງການປຸງແຕ່ງໄມ້.**

2. **<u>ເນື້ອໃນ</u>**

ໃນຕອນຕົ້ນ ທ່ານ ໄຮໂກ ຫົວໜ້າໂຄງການ FLEGT ໄດ້ສະເໜີກ່ຽວກັບການສ້າງຮ່າງນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ໃນຂະແໜງການປຸງແຕ່ງ ໂດຍລວມ, ຂໍ້ບັງຄັບຕ່າງໆ ຂອງປະເທດສະຫະພາບຢູຣົບ ກ່ຽວກັບການນຳເຂົ້າສິນຄ້າປະເພດໄມ້ ລວມທັງຂະບວນການຕ່າງໆໃນການຈັດຫາໄມ້ ແລະ ແຫຼ່ງທີ່ມາຂອງໄມ້. ນອກນີ້ກໍ່ຍັງໄດ້ເວົ້າເຖິງດ້ານສິ່ງແວດລ້ອມ, ສັງຄົມ ແລະ ເສດຖະກິດ .

- ທ່ານ ໄຮໂກ ໄດ້ສະເໜີກ່ຽວກັບນິຍາມໄມ້ ທີ່ກວມເອົາບັນດາຕ່ອງໂສ້ຂອງການຜະລິດໄມ້ທັງໝົດ ແລະ ແຫລ່ງທີ່ມາທັງໝົດຂອງໄມ້ທີ່ຈະໄດ້ອອກໃບອະນຸຍາດ.
- ການແກ້ໄຂບັນຫາ ແລະສິ່ງທີທ້າທາຍໃນການຄຸ້ມຄອງໄມ້ໂດຍສະເພາະໃນ ສປປ ລາວ.

- ບັນຫາທີ່ຕ້ອງໄດ້ມີການແກ້ໄຂພິຈາລະນາຜົນກະທົບຕໍ່ພາກສ່ວນກ່ຽວຂ້ອງທີ່ເກີດມາຈາກນິຕິກຳ ແລະ ການຈັດຕັ້ງປະຕິບັດນິຍາມຕ່າງໆ

ຕໍ່ມາ ທ່ານ ສີສະມຸດ ເວດສະພົງ ໄດ້ຂຶ້ນສະເໜີກ່ຽວກັບຮ່າງປຶ້ມຄູ່ມືຂອງວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ໃນຂະແໜງການຜະລິດ ແລະ ປຸງແຕ່ງໄມ້ ໂດຍລວມ. ການຜ່ານຮ່າງຄູ່ມືດັ່ງກ່າວ ບັນຫາຫລັກແມ່ນໄດ້ເນັ້ນໜັກໃສ່ບັນຫາຄວາມປອດໄພຂອງບັນດາເຄື່ອງຈັກທີ່ຮັບໃຊ້ໃນຂະແໜງການປຸງແຕ່ງໄມ້ ແລະ ເຟີນີເຈີ, ຄວາມປອດໄພຂອງຜູ້ໃຊ້ເຄື່ອງຈັກເປັນຕົ້ນຕໍ່, ເຫັນວ່າເນື້ອຫາຂອງຮ່າງປຶ້ມຄູ່ມືສະບັບດັ່ງກ່າວນີ້ ແມ່ນຜົນສຳເລັດໃນເບື້ອງຕົ້ນ ແຕ່ຍັງຈະໄດ້ມີການປັບປຸງແກ້ໄຂ ບາງຈຸດເພື່ອໃຫ້ແທດກັບສະພາບຕົວຈິງຂອງບ້ານເຮົາ.

ບັນດາຜູ້ແທນຜູ້ເຂົ້າຮ່ວມກອງປະຊຸມກໍ່ໄດ້ມີຄຳເຫັນຕໍ່ກັບປຶ້ມຄູ່ມືນັ້ນ ແລະ ສາມາດສັງລວມໄດ້ດັ່ງນີ້:

1. ຢາກໃຫ້ມີຄວາມເປັນມາ, ສາລະບານ, ຊື່ຜູ້ມີສ່ວນຮ່ວມໃນການຮ່າງປຶ້ມຄູ່ມືສະບັບດັ່ງກ່າວ;

2. ການເຮັດວຽກກັບເຄື່ອງຈັກແບບໃດຄວນໃສ່ເຄື່ອງປ້ອງກັນໄພບຸກຄົນແບບໃດໃຫ້ຖືກຕ້ອງນັ້ນ ຢາກໃຫ້ມີຮູບປະກອບພ້ອມເພື່ອສະດວກໃນການຈັດຕັ້ງປະຕິບັດ ແລະ ເບິ່ງຮູບແລ້ວສາມາດເຂົ້າໃຈໂລດ.

3.ຮ່າງປຶ້ມຄູ່ມືນີ້ສ່ວນຫຼາຍແມ່ນເໜັ້ນໃສ່ແຕ່ການເຮັດວຽກກັບເຄື່ອງຈັກໃຫ້ມີຄວາມປອດໄພ, ຢາກໃຫ້ເວົ້າເຖິງບັນຫາອື່ນຕື່ມອີກ ເປັນຕົ້ນ: ການເກັບມ້ຽນ ແລະ ການເຄື່ອນຍ້າຍວັດສະດຸ, ການອອກແບບສະຖານທີ່ເຮັດວຽກ, ສິ່ງແວດລ້ອມທາງກາຍະພາບ, ສິ່ງອຳນວຍຄວາມສະດວກດ້ານສະຫວັດດີການ ແລະ ອື່ນໆ ທີ່ເຫັນວ່າສຳຄັນ.

ຕໍ່ມາ ທ່ານ ເກີ ຊ່ຽວຊານ ຂອງອົງການ ຈີໄອແຊັດ ໄດ້ສະເໜີຂັ້ນຕອນ ໃນການຮ່າງນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ.

ຈາກນັ້ນ, ທ່ານ ຄຳພັດ ອອນລາສີ ຫົວໜ້າພະແນກຄວາມປອດໄພ ແລະ ສຸຂະພາບແຮງງານໄດ້ສະເໜີ ຮ່າງນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍໃນຂະແໜງການປຸງແຕ່ງໄມ້ ດ້ານວຽກງານແຮງງານ, ເຊິ່ງເປັນຮ່າງຄັ້ງທຳອິດຂອງ ສປປ ລາວ.

ຫຼັງຈາກນັ້ນ, ໄດ້ແບ່ງກຸ່ມສົນທະນາ ອອກເປັນ 2 ຈຸ ແຕ່ລະຈຸມີຫົວຂໍ້ແຕກຕ່າງກັນ ຄື: ຈຸທີ່ 1 ຄົ້ນຄ້ວາວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ແລະ ຈຸທີ່ 2 ຄົ້ນຄວ້າກ່ຽວກັບ ສິດ ແລະ ຜົນປະໂຫຽດຂອງຜູ້ອອກແຮງງານໃນຂະແໜງການອຸດສາຫະກຳປຸງແຕ່ງໄມ້ ແລະ ຜົນຂອງການຄົ້ນຄວ້າຂອງແຕ່ລະຈຸແມ່ນໄດ້ຄັດຕິດມາພ້ອມນີ້.

**3.ສະຫລຸບ**

ບັນຍາກາດຂອງການປະຊຸມ ແມ່ນດຳເນີນໄປດ້ວຍດີ ແລະ ປະສົບຜົນສຳເລັດຕາມຈຸດປະສົງເປົ້າໝາຍທີ່ວາງໄວ້ເປັນຢ່າງດີ, ຜູ້ເຂົ້າຮ່ວມແມ່ນຫ້າວຫັນແລກປ່ຽນຄຳຄິດເຫັນຢ່າງກົງໄປກົງມາ ແລະ ກອງປະຊຸມໄດ້ດຳເນີນມາຮອດເວລາ 16ໂມງ 30 ກໍໄດ້ປິດລົງເປັນທາງການ.

**ຜູ້ບັນທຶກກອງປະຊຸມ**

ຄຳພັດ ອອນລາສີ